ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສຳນັກງານໃຫຍ່

ເລກທີ: 071 /ທຄຕລ 2020
ນະຄອນຫຼວງວຽງຈັນ, ວັນທີ: 08 SEP 2020

# ໜັງສືແຈ້ງເຊີນ

**ເຖິງ:** ບັນດາບໍລິສັດ, ຫ້າງຮ້ານຕົວແທນຈຳໜ່າຍ ຫຼື ຜະລິດກະເປົາໜັງ ຢູ່ໃນນະຄອນຫລວງວຽງຈັນ.

**ເລື່ອງ :** ເຊີນເຂົ້າຮ່ວມການປະມູນລາຄາກະເປົາເງິນ (ແບບໜັງ).

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍແຈ້ງມາຍັງບັນດາບໍລິສັດ ແລະ ຫ້າງຮ້ານຕົວແທນຈຳໜ່າຍ ຫຼື ຜະລິດກະເປົາເງິນ (ແບບໜັງ) ເພື່ອເຂົ້າຮ່ວມການປະມູນລາຄາສະໜອງກະເປົາເງິນ (ແບບໜັງ) ທີ່ ທຄຕລ ຈະນຳໃຊ້ປະກອບເປັນລາງວັນຂອງ VISA CAMPAIGN ຕາມລາຍລະອຽດລຸ່ມນີ້:

| ລ/ດ | ລາຍການ | ລາຍລະອຽດສິນຄ້າ | ຈຳນວນ |
|---|---|---|---|
| 1 | ກະເປົາເງິນ (ແບບໜັງ) | - ກະເປົາໜັງ ຂະໜາດ 18,5 * 9,5 ຊມ ພັບໄດ້, ມີ 2 ສີ: ສີດຳ ແລະ ນ້ຳຕານອ່ອນ (ສຳລັບວັດສະດຸ ແມ່ນໃຫ້ຜູ້ສະໜອງສະເໜີມາເປັນຫຼາຍທາງເລືອກເຊັ່ນ: ໜັງງົວແທ້, ໜັງ PU ເກຼດພຼີມ້ຽມ)<br>- ດ້ານໃນກະເປົາມີບ່ອນໃສ່ເງິນ, ມີບ່ອນສອດສຳລັບໃສ່ບັດຕ່າງໆ.<br>- ດ້ານໜ້າກະເປົາໃສ່ກາ BCEL VISA (ກາເປັນຮູບແບບປຽບ).<br>- ກະເປົາແຕ່ລະໜ່ວຍຕ້ອງມີກ່ອງ (BOX), ຮູບແບບງາມ ເປັນສີດຳ ແລະ ສີນ້ຳຕານ (ດ້ານໜ້າເປັນກ່ອງສີລ້ວນ ຫຼື ມີລວດລາຍໜ້ອຍໜຶ່ງ ເປັນສີດ້ານ)<br>- ກະເປົາແຕ່ລະໜ່ວຍຕ້ອງມີຖົງກັນຝຸ່ນພ້ອມ. | 1.000<br>ຊຸດ<br>(ກະເປົາໜັງ+ກັບ+ຖົງເຈ້ຍ) |

**ເງື່ອນໄຂຂອງຜູ້ສະໜອງ ທີ່ມີຄວາມຕ້ອງການຍື່ນຊອງປະມູນຕ້ອງປະກອບມີດັ່ງນີ້:**

**<u>ເອກະສານຊອງທີ 1 (ບໍ່ປິດຊອງ).</u>**

1. ປະກອບເອກະສານໃນນາມນິຕິບຸກຄົນ ແລະ ດຳເນີນທຸລະກິດຢ່າງໜ້ອຍ 03 ປີຂຶ້ນໄປ ພ້ອມສຳເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນປີ 2019, ໃບຢັ້ງຢືນການເປັນຕົວແທນຈຳໜ່າຍ (ຖ້າມີ).
2. ລະບຸຍີ່ຫໍ້, ປີຜະລິດສິນຄ້າ ຫຼື ມີເອກະສານທີ່ກ່ຽວຂ້ອງ, ລະບຸໄລຍະເວລາໃນການຮັບປະກັນ, ຜົນງານຜ່ານມາທີ່ເຄີຍສະໜອງສິນຄ້າປະເພດດັ່ງກ່າວ (ກະເປົາເງິນແບບໜັງ) ໃຫ້ພາກສ່ວນອື່ນ.
3. ກຳນົດຍື່ນຊອງມາດຕະຖານເຕັກນິກ ຈະປິດຮັບວັນທີ **18/09/2020 ເວລາ 14:00** ໂມງ ທີ່ພະແນກຫ້ອງການບໍລິຫານ-ການເງິນ ສຳນັກງານໃຫຍ່ ທີ່ປ່ອງບໍລິການຂາເຂົ້າ-ຂາອອກ ຊັ້ນ 4C (ຕ້ອງເຂົ້າເລກທີຂາເຂົ້າຂອງ ທຄຕລ).

**<u>ເອກະສານຊອງທີ 2 (ປິດຊອງ)</u>.**

1. ໃບສະເໜີລາຄາໃຫ້ລະບຸລາຄາ/ຫົວໜ່ວຍ ແລະ ລວມອາກອນມູນຄ່າເພີ່ມ 10% (ມີບິນອາກອນຄົບຖ້ວນ) ທັງໝົດເປັນສະກຸນເງິນກີບໃຫ້ຄົບຖ້ວນ.
2. ໃນວັນທີ **25/09/2020 ເວລາ 09:30** ໂມງ ແມ່ນມື້ເປີດຊອງປະມູນ ເຊິ່ງຜູ້ສະໜອງຈະຕ້ອງຖືຊອງລາຄາມາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມຊັ້ນ 3 ອາຄານ C (ເປີດຊອງຊ່ອງໜ້າກັບຄະນະກຳມະການ).


ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-1, 222495, 217904, 217898-9
ແຟັກ: (856-21) 213202, 223012, 223245. Website: http://www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

3. ຜູ້ສະໜອງຕ້ອງກຳນົດລາຍລະອຽດສິນຄ້າ ພ້ອມທັງລະບຸເງື່ອນໄຂຕ່າງໆມາໃຫ້ຄົບຖ້ວນ ແລະ ໃຫ້ກົງກັບຄວາມຕ້ອງ ການໃນຕາຕະລາງຂ້າງເທິງນັ້ນ.
4. ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 2% ຂອງມູນຄ່າທັງໝົດ ໂດຍໜັງສືຄ້ຳປະກັນທີ່ອອກໂດຍທະນາຄານພາຍໃນ (ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງ ວັນທີ 25/10/2020) ຫຼື ແຊັກທີ່ວິຊ່າແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄ້ຳປະກັນດັ່ງກ່າວຄືນ.

❖ **<u>ໝາຍເຫດ:</u>** ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:

- ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ຫຼື ບໍ່ຍື່ນເງິນຄ້ຳປະກັນການປະຕິບັດສັນຍາ ຜູ້ຊະນະການປະມູນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 2% ຂອງມູນຄ່າລວມທີ່ສະເໜີປະມູນ.
- ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຄ່າທຳນຽມໃນການຈົດທະບຽນສັນຍາ ແມ່ນມອບໃຫ້ເປັນຄວາມຮັບຜິດຊອບຂອງຜູ້ສະໜອງ.

**- ການຊຳລະແບ່ງຈ່າຍເປັນ 02 ງວດ ລຸ່ມນີ້:**

* ງວດທີ 1: ຊຳລະ 90% ຂອງມູນຄ່າ ພາຍຫຼັງທີ່ ທຄຕລ ໄດ້ຮັບເຄື່ອງຄົບຖ້ວນ.

* ງວດທີ 2: ຊຳລະ 10% ຂອງມູນຄ່າ ພາຍຫຼັງຄົບກຳນົດການຄ້ຳປະກັນຄຸນະພາບສິນຄ້າ 6 ເດືອນ, ແຕ່ການຮັບປະກັນຄຸນນະພາບສິນຄ້າ ຕ້ອງແມ່ນຕາມໄລຍະເວລາຂອງສິນຄ້າດັ່ງກ່າວ ທີ່ຜູ້ສະໜອງແຈ້ງເບື້ອງຕົ້ນ, ຖ້າຫາກຜູ້ສະໜອງເມີນເສີຍບໍ່ແກ້ໄຂ ຫຼື ປ່ຽນແທນສິນຄ້າທີ່ມີຕຳໜິ (ບໍ່ໄດ້ມາດຕະຖານ) ແມ່ນ ທຄຕລ ຈະປັບໄໝ 10% ຂອງມູນຄ່າ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

ຜູ້ອຳນວຍການ
ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC ນະຄອນຫຼວງ

ບົນທະລາດ ແກ້ວປະເສີດ

ສອບຖາມລາຍລະອຽດເພີ່ມເຕີມ: bidcommittee@bcel.com.la
ຮູບພາບຕົວຢ່າງສິນຄ້າ:




CHANEL
CHANEL




ວັດສະດຸ: ເຮັດຈາກໜັງ
INTHASOUPHAN
1
18.5 cm
9.5 cm
VISA
2
18.5 cm
9.5 cm
VISA

# (ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)

- ອີງຕາມໃບແຈ້ງປະມູນ ສະບັບເລກທີ …………./ທຄຕລ, ລົງວັນທີ ………………….. (ຍື່ນຊອງສະເປັກບໍ່ເກີນ ວັນທີ …………………….)

| ລ/ດ | ຜູ້ສະໜອງ | ເງື່ອນໄຂ | | | | | | | | | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|
| | | ໃບທະບຽນວິສາຫະກິດ | ໃບຢັ້ງຢືນການເສຍອາກອນ | ໄລຍະເວລາໃນການດຳເນີນທຸລະກິດ | ຜົນງານຜ່ານມາ (ເຄີຍສະໜອງໃຫ້ພາກສ່ວນໃດແນ່) | ໃບອະນຸຍາດເປັນຕົວແທນ | ປະເພດ / ວັດສະດຸ / ຍີ່ຫໍ້ສິນຄ້າ | ປີທີ່ຜະລິດ | ການຮັບປະກັນສິນຄ້າ | ກຳນົດສົ່ງ (ວັນລັດຖະການ) | |
| 1 | ບ/ສ……… | (999/ 02.01.2015) | 2019 | …. ປີ | (ໃຫ້ລະບຸ) | (ໃຫ້ລະບຸ, ຖ້າມີ) | (ໃຫ້ລະບຸລະອຽດ) | ປີ ……….. | …. ປີ | …… | |

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະເຈົ້າຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ……………………

ຜູ້ອຳນວຍການບໍລິສັດ

ຜູ້ປະສານງານ:
ຊື່:
ໂທ: